ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງອັດຕະປື

ພະແນກອຸດສາຫະກຳ ແລະ ການຄ້າ

(ຄະນະກຳມະການປະມູນຂາຍໄມ້ຍຶດຂັ້ນແຂວງ)

ເລກທີ...1236.../ອຄ.ອປ

ອັດຕະປື, ວັນທີ 26 ພະຈິກ 2018

## ແຈ້ງການປະມູນ

**ເຖິງ : ຜູ້ອຳນວຍການໂຮງງານປຸງແຕ່ງໄມ້ ແລະໂຮງງານເຟີນີເຈີໄມ້ສຳເລັດຮູບ ພາຍໃນແຂວງ.**

**ເລື່ອງ : ເຊີນເຂົ້າຮ່ວມປະມູນຊື້ໄມ້ ບ້ວງໄມ້ຍຶດທ່ອນໂຮມຊາຍແດນລາວ - ຫວຽດນາມ ຈຳນວນ 01 ບັນຊີ ເທົ່າກັບ 151 ທ່ອນ, ບໍລິມາດ : 697,654 ມ3 (ຫົກຮ້ອຍເກົ້າສິບເຈັດຈຸດຫົກຫ້າສີ່ແມັດກ້ອນ ).**

- ອີງຕາມ ຄຳສັ່ງ ເລກທີ່ 15/ນຍ, ລົງວັນທີ່ 13/05/2016 ກ່ຽວກັບການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ກວດກາການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້.
- ອີງຕາມ ຄຳສັ່ງແນະນຳເລກທີ 0336/ອຄ.ກຂອ, ວັນທີ 13 ມີນາ 2017 ວ່າດ້ວຍການແນະນຳການຈັດຕັ້ງປະຕິບັດປະມູນຂາຍໄມ້ຍຶດເປັນຂອງລັດ.
- ອີງຕາມ ຂໍ້ຕົກລົງ ເລກທີ 0918/ອຄ.ກຈພງ, ລົງວັນທີ 10 ກໍລະກົດ 2018 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ.
- ອີງຕາມ ສະໂນດນຳສົ່ງບັນຊີໄມ້ສະໜາມ II ສະບັບເລກທີ 828/ກງຂ, ລົງວັນທີ 06 ພະຈິກ 2018.

ພະແນກອຸດສາຫະກຳ ແລະ ການຄ້າ ແຂວງອັດຕະປື ( ຄະນະກຳມະການປະມູນຂາຍໄມ້ຍຶດຂັ້ນແຂວງ ) ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຊາບ ກ່ຽວກັບການຈັດຕັ້ງປະມູນຂາຍໄມ້ຍຶດຂອງແຂວງອັດຕະປືເຊິ່ງມີລາຍລະອຽດ ດັ່ງນີ້ :

**I. ໄມ້ຍຶດທ່ອນໂຮມ ຊາຍແດນລາວ - ຫວຽດນາມ ທີ່ຈະປະມູນຂາຍ ມີຈຳນວນທັງໝົດ 01 ບັນຊີ ເທົ່າກັບ 151 ທ່ອນ, ບໍລິມາດ :697,654 ແມັດກ້ອນ (ຫົກຮ້ອຍເກົ້າສິບເຈັດຈຸດຫົກຫ້າສີ່ແມັດກ້ອນ ) ລາຍລະອຽດດັ່ງນີ້:**

**+ ໄມ້ຄຸ້ມຄອງ 1 : ຈຳນວນທັງໝົດ 151 ທ່ອນ, ບໍລິມາດ : 697,654 ມ3. ໃນນັ້ນ :**

| | | | |
|---|---|---|---|
| - ໄມ້ຍົມຜາ | ຈຳນວນ 04 ທ່ອນ, | ບໍລິມາດ | 12,281 ມ3. |
| - ໄມ້ຊີ | ຈຳນວນ 10 ທ່ອນ, | ບໍລິມາດ | 20,553 ມ3. |
| - ໄມ້ຍາງ | ຈຳນວນ 02 ທ່ອນ, | ບໍລິມາດ | 7,225 ມ3. |
| - ໄມ້ບາກ | ຈຳນວນ 126 ທ່ອນ, | ບໍລິມາດ | 642,278 ມ3. |
| - ໄມ້ຮາວ | ຈຳນວນ 01 ທ່ອນ, | ບໍລິມາດ | 2,655 ມ3. |
| - ໄມ້ເປືອຍ | ຈຳນວນ 08 ທ່ອນ, | ບໍລິມາດ | 12,662 ມ3. |

**II. ເງື່ອນໄຂເພື່ອເຂົ້າຮ່ວມການປະມູນຊື້ໄມ້ຍຶດຂອງແຂວງ.**

1. ຜູ້ທີ່ມີໂຮງງານປຸງແຕ່ງໄມ້, ເຟີນີເຈີປຸງແຕ່ງໄມ້ທີ່ມີທະບຽນຖືກຕ້ອງຕາມກົດໝາຍ ຂອງ ສປປລາວ ຢູ່ພາຍໃນແຂວງ ແລະ ຕ່າງແຂວງ ( ໃຫ້ສຳເນົາຄັດຕິດ ), ຕ້ອງເປັນໂຮງງານທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດ, ເປັນໂຮງງານທີ່ສາມາດປຸງແຕ່ງສຳເລັດຮູບໄດ້ ແລະ ບໍ່ຕັ້ງໃນ 03 ປະເພດປ່າ.

2. ຕ້ອງສາມາດຜະລິດເປັນຜະລິດຕະພັນສຳເລັດຮູບ ຕາມຂໍ້ຕົກລົງສະບັບເລກທີ1833/ອຄ, ລົງວັນທີ 03 ຕຸລາ 2016 ແລະ ( ສະບັບປັບປຸງ ) ເລກທີ 0002/ອຄ.ກຂອ, ລົງວັນທີ 03 ມັງກອນ 2018 ວ່າດ້ວຍການຮັບຮອງເອົາລາຍການຜະລິດຕະພັນໄມ້ ເພື່ອສົ່ງອອກ ແລະ ຫ້າມສົ່ງອອກ.

3. ເງື່ອນໄຂຜູ້ທີ່ມີສິດເຂົ້າຮ່ວມການປະມູນ ຕ້ອງແມ່ນຜູ້ອຳນວຍການ ຫຼື ຕົວແທນ ຂອງໂຮງງານປຸງແຕ່ງໄມ້ ທີ່ໄດ້ຮັບການແຕ່ງຕັ້ງມອບສິດ, ສາມາດຕັດສິນບັນຫາໃນການປະມູນໄດ້.

4. ຕ້ອງເປັນໂຮງງານປຸງແຕ່ງໄມ້ທີ່ມີຄວາມພ້ອມທາງດ້ານຖານະການເງິນ, ມີໃບຢັ້ງຢືນຖານະການເງິນຈາກທະນາຄານຕິດຄັດມາພ້ອມ.

5. ຕ້ອງແມ່ນໂຮງງານປຸງແຕ່ງໄມ້ ທີ່ບໍ່ມີໜີ້ສິນ ຄ່າພັນທະອາກອນ ຕ່າງໆກັບລັດ. ກໍລະນີຜູ້ຊະນະການປະມູນຫາກມີໜີ້ສິນນຳລັດ ຄະນະກຳມະການປະມູນຊື້ - ຂາຍໄມ້ຂັ້ນແຂວງ ແມ່ນຈະໄດ້ມີການຄົ້ນຄ້ວາພິຈາລະນາ.

6. ຜູ້ຊະນະການປະມູນ ຕ້ອງຖອກເງິນມັດຈຳ 10 % ກ່ອນຂໍຂໍ້ຕົກລົງອະນຸມັດຂາຍຂອງທ່ານເຈົ້າແຂວງ.

## III. ວັນເວລາເປີດເປີດຂາຍຊອງປະມູນ.

ຜູ້ທີ່ສົນໃຈໃຫ້ເຂົ້າມາພົວພັນຊື້ຊອງປະມູນ ທີ່ພະແນກອຸດສາຫະກຳ ແລະການຄ້າ ແຂວງອັດຕະປື (ຂະແໜງການນຳເຂົ້າ ແລະ ສົ່ງອອກ ) ໃນໂມງລັດຖະການ.

- ກຳນົດວັນເວລາຂາຍຊອງປະມູນ ແມ່ນ 15 ວັນລັດຖະການ ( ນັບແຕ່ວັນທີ 26/11/2018 – 17/12/2018 ).
- ກຳນົດວັນເວລາມື້ເປີດຊອງປະມູນແມ່ນເວລາ 9 : 00 ໂມງເຊົ້າ ຂອງວັນທີ 18/12/2018.
- ສະຖານທີ່ : **ຫ້ອງປະຊຸມພະແນກອຸດສາຫະກຳ ແລະການຄ້າ ແຂວງອັດຕະປື.**
- ລາຄາຊອງປະມູນ : 1.000.000 ກີບ/ຊອງ (ສຳລັບຄ່າຊອງປະມູນນັ້ນ ແມ່ນບໍ່ໄດ້ສົ່ງຄືນ).
- ກະລຸນາຖືຊອງປະມູນໄວ້ກັບຕົນເອງ ຈົນຮອດເວລາ 9 : 00 ໂມງເຊົ້າຂອງວັນທີ 18/12/2018, ຈຶ່ງໃຫ້ມາມອບສົ່ງນຳຄະນະກຳມະການປະມູນຂາຍໄມ້ ທີ່ຫ້ອງປະຊຸມ : **ພະແນກອຸດສາຫະກຳ ແລະການຄ້າ ແຂວງອັດຕະປື,** ຖ້າກາຍຖືວ່າສະຫຼະສິດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອເຂົ້າຮ່ວມການປະມູນ ຕາມກຳນົດເວລາ ຂ້າງເທິງດ້ວຍ.

**ຫົວໜ້າພະແນກອຸດສາຫະກຳ ແລະການຄ້າແຂວງ.**

**(ຄະນະກຳມະການປະມູນຂາຍໄມ້ຂັ້ນແຂວງ)**

ຄຳຫວັນ ຈັນທະໂຄດ

Khamvan CHANTHAKHOT

ຕິດຕໍ່ພົວພັນ:

- ທ່ານ ພະທັດໄຊ 020 2229 2298
- ທ່ານ ນາງຄານດາວອນ 020 2242 3777
- ທ່ານ ທິດປະກາຍສີ 020 5553 4456